ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ໂທ: 021 214013-14

ເລກທີ 4624 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 15 MAY 2023

# ໜັງສືແຈ້ງການ

**ຮຽນ:** ທ່ານຫົວໜ້າພະແນກສາທາລະນະສຸກ ..........................................................

**ເລື່ອງ:** ການອອກອະນຸຍາດນຳເຂົ້າອາຫານ ແບບອີເລັກໂທຣນິກ ໂດຍຜ່ານລະບົບແຈ້ງພາສີປະຕູດຽວ (Lao National Single Window – LNSW).

- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 23 ກໍລະກົດ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ, ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019;
- ອີງຕາມ ແຈ້ງການເປີດນຳໃຊ້ລະບົບແຈ້ງພາສີປະຕູດຽວໃນການອະນຸຍາດນຳເຂົ້າແບບອີເລັກໂທຣນິກ, ສະບັບເລກທີ 14297/ກອຢ, ລົງວັນທີ 19 ທັນວາ 2022;
- ອີງຕາມ ການຄົ້ນຄ້ວາຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜ່ານການຈັດຕັ້ງປະຕິບັດທົດລອງນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ໃນການອອກອະນຸຍາດນຳເຂົ້າອາຫານ ໃຫ້ແກ່ 20 ບໍລິສັດນຳເຂົ້າອາຫານ, ທີ່ນະຄອນຫຼວງວຽງຈັນ, ແຕ່ວັນທີ 9 ມັງກອນ 2023 ຈົນເຖິງປະຈຸບັນເຫັນວ່າ: ການພິຈາລະນາອອກອະນຸຍາດນຳເຂົ້າອາຫານແມ່ນມີຄວາມສະດວກວ່ອງໄວຂຶ້ນ, ສາມາດເກັບກຳຂໍ້ມູນການນຳເຂົ້າ, ຫຼຸດຜ່ອນການສິ້ນເປືອງຊັບພະຍາກອນ ແລະ ຫົວໜ່ວຍທຸລະກິດນຳເຂົ້າອາຫານສາມາດຕິດຕາມເອກະສານຂໍອະນຸຍາດນຳເຂົ້າໄດ້ໃນລະບົບ. ສະນັ້ນ, ກົມອາຫານ ແລະ ຢາ ເຫັນດີສືບຕໍ່ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍລະບົບອອກອະນຸຍາດນຳເຂົ້າອາຫານ ແບບອີເລັກໂທຣນິກ ຜ່ານລະບົບແຈ້ງພາສີປະຕູດຽວ (LNSW) ລົງໄປສູ່ແຂວງທີ່ເປີດໃຊ້ລະບົບດັ່ງກ່າວຄື: ແຂວງຫຼວງນ້ຳທາ, ແຂວງຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ. ແບບຟອມໃບອະນຸຍາດນຳເຂົ້າ ແລະ ການເກັບກຳຂໍ້ມູນການນຳເຂົ້າຕ່າງໆ (ມີເອກະສານຄັດຕິດ).

ບໍລິສັດ ພັດທະນາລະບົບແຈ້ງພາສີປະຕູດຽວ (LNSW) ຈະດຳເນີນການຝຶກອົບຮົມໃຫ້ແກ່ຂະແໜງອາຫານ ແລະ ຢາ ແລະ ເຈົ້າໜ້າທີ່ອາຫານ ແລະ ຢາ ປະຈຳດ່ານສາກົນ. ສ່ວນ ວັນ, ເວລາ ແລະ ສະຖານທີ່ຈະແຈ້ງໃຫ້ຊາບຕາມພາຍຫຼັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວທາວົງ